LUANG PRABANG FILM FESTIVAL
info@lpfilmfest.org
+856 (0)20 5789 0001
Post Office Box 1163
Luang Prabang, Lao PDR
www.lpfilmfest.org
www.facebook.com/lpfilmfest

Lao Filmmakers Fund
Luang Prabang Film Festival

19 ກໍລະກົດ 2021

## ເປີດຮັບສະໝັກ

ບຸນມະໂຫລານຮູບເງົາຫຼວງພະບາງ ມີຄວາມຍິນດີປະກາດເປີດຮັບຜູ້ສະໝັກສໍາລັບກອງທຶນນັກສ້າງຮູບເງົາລາວ ປີທີ 8. ກອງທຶນນີ້ ໄດ້ຮັບການສະໜັບສະໜຸນຈາກສາທາລະນະຊົນ ແລະ ຊ່ວຍໃຫ້ນັກສ້າງຮູບເງົາລາວສະໝັກຂໍທຶນກ້ອນນ້ອຍ ກ້ອນໜຶ່ງເພື່ອຊ່ວຍໃນໂຄງການຮູບເງົາຂອງຕົນ ທຶນນີ້ມີໃຫ້ປີລະຄັ້ງ.

ໂຄງການທີ່ຈະໄດ້ຮັບທຶນແມ່ນຈະຖືກຄັດເລືອກໂດຍຄະນະບໍລິຫານຂອງ ບຸນມະໂຫລານຮູບເງົາຫຼວງພະບາງ, ໂດຍ ອີງໃສ່ຄຸນສົມບັດຂອງໂຄງການ ແລະ ແຜນການຈັດຕັ້ງປະຕິບັດ.

ສໍາລັບປີ 2021, ງົບປະມານສູງສຸດທີ່ສາມາດຂໍໄດ້ແມ່ນ $10,000 (ປະມານ 100,000,000 ກີບ), ແຕ່ບໍ່ໝາຍຄວາມວ່າໂຄງການທີ່ສະເໜີເຂົ້າມາຈະໄດ້ເຕັມຕາມຈໍານວນນີ້ທຸກໂຄງການ. ຈໍານວນໂຄງການທີ່ຈະໄດ້ຮັບຄັດເລືອກ ຈະຂຶ້ນກັບງົບປະມານທີ່ໂຄງການເຫຼົ່ານັ້ນສະເໜີຂໍມາ.

**ກໍານົດປິດຮັບສະໝັກ:**
13 ກັນຍາ 2021 ເວລາ 23:59

**ຄຸນສົມບັດຂອງໂຄງການທີ່ຈະສະໝັກ:**

- ຜູ້ກໍາກັບຮູບເງົາເປັນຄົນລາວ (ເຊິ່ງຈະໄດ້ຮັບການພິຈາລະນາເປັນພິເສດ), ຫຼື ມີທີມງານເປັນຄົນລາວຢ່າງໜ້ອຍ 75%
- ຖ່າຍທໍາຢ່າງໜ້ອຍ 50% ໃນປະເທດລາວ
- ແນວຄວາມຄິດ, ຕົ້ນສະບັບເລື່ອງ, ແລະ ການສະໝັກ ຕ້ອງເປັນຕົ້ນສະບັບ ແລະ ເປັນຂອງຜູ້ສ້າງຮູບເງົາແທ້
- ຮູບເງົາເລື່ອງນັ້ນຕ້ອງບໍ່ແມ່ນໂຄງການທີ່ຖືກຈ້າງໃຫ້ຜະລິດໂດຍບໍລິສັດ ຫຼື ອົງກອນໃດໜຶ່ງ

- ພິເສດສຳລັບປີ2021 ບຸນມະໂຫລານຮູບເງົາຫຼວງພະບາງ ມີຄວາມພາກພູມໃຈສົ່ງເສີມໃຫ້ຜູ້ສະໝັກໃຫ້ການເນັ້ນໜັກກ່ຽວກັບບັນຫານິເວດວິທະຍາ ແລະ ການສົນທະນາໂອ້ລົມກ່ຽວກັບບັນຫາດັ່ງກ່າວ.
- ບຸນມະໂຫລານຮູບເງົາຫຼວງພະບາງ ສະໜັບສະໜຸນຜູ້ສະໝັກຈາກອົງກອນທີ່ດ້ອຍໂອກາດ ແລະ ນຳສະເໜີກ່ຽວກັບສະມາຊິກໃນກຸ່ມຄົນທີ່ດ້ອຍໂອກາດຍ້ອນຈຸດພິເສດຕົວຕົນຂອງເຂົາ, ເຊິ່ງອາດລວມ ມີ: ແມ່ຍິງ, ຊົນເຜົ່າກຸ່ມນ້ອຍ, ກຸ່ມຄົນຫຼາກຫຼາຍທາງເພດ, ຄົນພິການ, ໄວໜຸ່ມ ແລະ ໄວຊະລາ.
- ຖ້າງົບປະມານຈະກອງທຶນເປັນສິ່ງຈຳເປັນໃນການເລີ່ມສ້າງຮູບເງົາຂອງເຈົ້າ, ທາງເຮົາຂໍແຈ້ງວ່າ ງົບປະມານຈະບໍ່ອອກຈົນກວ່າວັນທີ **19 ພະຈິກ 2021** ເປັນຢ່າງໄວ.

**ວິທີສະໝັກ:**
ໃຫ້ປະຕິບັດຕາມຂໍ້ແນະນຳການປະກອບເອກະສານຂ້າງລຸ່ມນີ້ຢ່າງລະອຽດ ແລ້ວອັບໂຫຼດເອກະສານ (ໃນຮູບແບບ .docx ຫຼື .pdf), ງົບປະມານ ແລະ ແຜນວຽກລົງໃນໂຄງຮ່າງທີ່ຈັດໄວ້ (.xls) ລົງໃນ ແບບຟອມສະໝັກ ບໍ່ໃຫ້ກາຍວັນທີ **13 ກັນຍາ 2021**. ເນື່ອງຈາກວ່າ ການຂໍທຶນສາກົນຕ້ອງໃຊ້ເອກະສານພາສາອັງກິດ, ພວກເຮົາຈຶ່ງຢາກໃຫ້ສົ່ງເອກະສານສະໝັກເປັນພາສາອັງກິດ. ແຕ່ພາສາລາວ ກໍ່ຈະຮັບເຊັ່ນດຽວກັນ.

ເອກະສານສະໝັກທຸກອັນຕ້ອງປະກອບມີຂໍ້ມູນຕາມລຳດັບຕໍ່ໄປນີ້:

**ໜ້າປົກ**

1. ຊື່ໂຄງການ
2. ຊື່, ທີ່ຢູ່, ອີເມວ, ແລະ ເລກໂທລະສັບຂອງຜູ້ຮັບຜິດຊອບຫຼັກຂອງໂຄງການ (ໂດຍທົ່ວໄປຈະແມ່ນຜູ້ກຳກັບ ຫຼື ຜູ້ຜະລິດ)

**ພາບລວມຂອງໂຄງການ**

1. ເນື້ອເລື່ອງໂດຍສັງເຂບ: ປະໂຫຍກສັງລວມຫຍໍ້ ປະໂຫຍກໜຶ່ງທີ່ເວົ້າກ່ຽວກັບຂໍ້ຂັດແຍ່ງຫຼັກ.
2. ລະບຸຄຳທີ່ເປັນກຸນແຈສຳຄັນຂອງເນື້ອຫາຂອງຮູບເງົາມາ 1-4 ຄຳ. (ຕົວຢ່າງ: ສະພາບອາກາດ, ການສຶກສາ, ການປ່ຽນແປງ, ຊົນຊາດ, ສິດທິມະນຸດ...)
3. ຂຽນອະທິບາຍກ່ຽວກັບຮູບເງົາ ບໍ່ເກີນ 50 ຄຳ. ເຈົ້າອາດເລີ່ມຕົ້ນປະໂຫຍກດ້ວຍ "ຮູບເງົາເລື່ອງນີ້ແມ່ນກ່ຽວກັບ..."

**ການບັນຍາຍເລື່ອງ (ຫຼາຍສຸດ 1,000 ຄຳ)**

1. ອະທິບາຍຮູບເງົາລະອຽດຂຶ້ນຕື່ມ ໂດຍອະທິບາຍຕົວບົດ, ຮູບແບບ, ໂຄງຮ່າງ, ສໄຕລ໌, ແລະມຸມມອງຂອງເລື່ອງ.
2. ກະລຸນາລະບຸຄວາມຄືບໜ້າຂອງໂຄງການ ໃນເວລາຂຽນໃບສະໝັກ, ແລະ ອະທິບາຍແດ່ວ່າຈະໃຊ້ງົບປະມານຈາກກອງທຶນແນວໃດ ເພື່ອຊ່ວຍໃຫ້ໂຄງການຄືບໜ້າໄປອີກ.

**ການແຈກຢາຍ**

1. ແມ່ນໃຜເປັນກຸ່ມຜູ້ຊົມຫຼັກຂອງໂຄງການ ແລະ ຈະເຂົ້າເຖິງເຂົາເຈົ້າແນວໃດ?
2. ເຈົ້າມີແຜນວ່າຈະເຮັດຫຍັງກັບຮູບເງົາເລື່ອງນີ້?

**ບຸຄະລາກອນຂອງໂຄງການ (ແຕ່ລະຄົນບໍ່ເກີນ 100 ຄຳ)**

1. ອະທິບາຍປະຫວັດຂອງສະມາຊິກທີມງານຜະລິດ ໂດຍຫຍໍ້, ໂດຍປະກອບມີປະສົບການການສ້າງ ຮູບເງົາຂອງແຕ່ລະຄົນ.

## ງົບປະມານ ແລະ ແຜນວຽກ

ຜູ້ສະໝັກຕ້ອງສົ່ງ ງົບປະມານຂອງໂຄງການ ແລະ ແຜນ ຄາດຄະເນ
ໂດຍນຳໃຊ້ໂຄງຮ່າງທີ່ທາງ ບຸນມະໂຫລານຮູບເງົາຫຼວງພະບາງ ໄດ້ສະໜອງໃຫ້.
ຜູ້ສະໝັກຕ້ອງສຳເນົາໂຄງຮ່າງນີ້, ຫຼື ດາວ ໂຫຼດເປັນໄຟລ໌ .xls ເພື່ອທີ່ຈະໃຊ້ໄດ້,
ເຈົ້າສາມາດເຂົ້າຫາໂຄງຮ່າງນີ້ໄດ້ ທີ່ນີ້.

## ການລາຍງານ

ທຸກຄົນທີ່ສະໝັກຂໍການຊ່ວຍເຫຼືອຈາກກອງທຶນນັກສ້າງຮູບເງົາ ຕ້ອງພ້ອມທີ່ຈະເກັບບັນທຶກການໃຊ້ຈ່າຍລະອຽດ
ຕໍ່ງົບປະມານທີ່ໄດ້ຈາກກອງທຶນໄປ, ແລ້ວລາຍງານໃຫ້ກັບບຸນມະໂຫລານຮູບເງົາຫຼວງພະບາງ
ເປັນໄຕມາດໄປຕະ ຫຼອດເວລາທີ່ງົບປະມານຈາກກອງທຶນໄດ້ຖືກນຳໃຊ້.
ທາງບຸນມະໂຫລານຮູບເງົາຫຼວງພະບາງ ອາດຂໍໃຫ້ເຈົ້າຕິດຄັດ ໃບຮັບເງິນຕົ້ນສະບັບມານຳບົດລາຍງານ.

## ການຄັດເລືອກໂຄງການ

ທຸກໂຄງການທີ່ຖືກຄັດເລືອກໂດຍຄະນະບໍລິຫານບຸນມະໂຫລານຮູບເງົາຫຼວງພະບາງ
ຈະໄດ້ຮັບການແຈ້ງບອກພາຍ ໃນວັນທີ **29 ພະຈິກ 2020.**

## ການສະໜັບສະໜູນ

ທາງບຸນມະໂຫລານຮູບເງົາຫຼວງພະບາງ ໄດ້ສະໜອງຕົວຢ່າງໃບສະໝັກ, ງົບປະມານ, ແລະ ແຜນວຽກ
ເພື່ອຊ່ວຍ ນັກສ້າງຮູບເງົາກຽມການສະໝັກ. ເອກະສານເຫຼົ່ານີ້ສາມາດເບິ່ງໄດ້ ທີ່ນີ້.
ກະລຸນາເຂົ້າໃຈວ່າເອກະສານເຫຼົ່ານີ້ຄວນ ໃຊ້ເປັນພຽງຕົວຢ່າງສຳລັບການກະກຽມການສະໝັກເທົ່ານັ້ນ.
ເອກະສານທີ່ຈະຍື່ນມາສະໝັກຕ້ອງເປັນສະບັບຕົ້ນ ຂອງເຈົ້າຂອງເອງ.

ຖ້າມີຄຳຖາມເພີ່ມເຕີມ, ກະລຸນາສົ່ງ ອີເມວຫາພວກເຮົາທີ່ lff@lpfilmfest.org

Lao Filmmakers Fund
Luang Prabang Film Festival

19 July 2021

## Call for Applications

The Luang Prabang Film Festival (LPFF) is pleased to announce its application call for the Lao Filmmakers Fund. Since 2013, the Fund has comprised grants and donations secured by LPFF, and it exists so that Lao filmmakers may apply for direct support to help realize their film projects. Support — in the form of grants and honorariums — is currently available once per year. Successful projects will be confirmed by the LPFF Board of Directors, based on the merits of the project and an organized and feasible plan for its execution.

For the 2021 cycle, the maximum grant request is $10,000 USD (about 100,000,000 LAK), though this does not guarantee that any one project will be awarded this amount. The number of projects supported will depend on the amount of funding requested and awarded.

**Submission Due Date:**
13 September 2021 by 23:59

**Project Eligibility:**

- Either the film's director must be a Lao national (preference will be given to those who are), or the project must employ at least 75% Lao crew
- At least 50% of the film must be shot in Laos
- Film concept, script, and application must be completely original and belong to the filmmakers
- Film must not be a project commissioned by a company or organization
- Special to the 2021 call, LPFF strongly encourages applications that highlight ecological issues and civil discourse around such issues
- As always, LPFF strongly encourages applications from and about members of marginalized identity groups, including, but not limited to, women, ethnic minorities, LGBTQIA+, people with disabilities, the young, and the elderly
- If support is necessary to begin your production, please note that funding will not be available until 19 November 2021, at the earliest.

**To Apply:**
Follow the guidelines carefully and upload your application with the following materials (.docx or .pdf preferred), budget and timeline in the required templates (.xls) to our submission form no later than **13 September 2021**. As international proposals are generally submitted in English, we encourage you to submit your application in English. However, Lao applications will be accepted.

All applications must include the following information, in the same order as listed below:

**Cover Sheet**

1. Project Name
2. Name, mailing address, email address, and phone number for the main contact person for the project (typically the film's director or producer).

**Project Overview**

1. Logline: A brief, one-sentence summary of the film that includes the central conflict.
2. Provide one to four keywords that generally characterize what the film is about. (For example: Climate, Education, Change, Race, Human Rights...)
3. Include a short description of the film's themes and artistic approach, which uses less than 50 words. You might want to start with "This film is about..."

**Narrative (1,000 words maximum)**

1. Describe the film in greater detail, providing a clear sense of the film's theme, format, structure, style, and point of view.
2. Please include the current status of the project, and explain how LPFF funds will be used to advance the project.

**Distribution**

1. Who is the target audience for this project, and how will it reach them?
2. What do you plan to do with this film?

**Project Personnel (100 words each)**

1. Provide a short bio of each key member of the production team, which includes his or her filmmaking experience.

**Requested Budget and Current Funding**

1. The amount of the total production budget.
2. List any income (and its source) already secured or confirmed.
3. The amount you are seeking from LPFF.

**Project Budget and Timeline**

Applicants will need to submit their project budget and estimated timeline using templates provided by LPFF. Applicants must make copies of the templates, or download them as .xls files in order to use them. The templates can also be found here.

**Reporting Requirements**

All individuals applying for support from the Lao Filmmakers Fund must be prepared to keep detailed financial records of any expenditure of the grant funds. Those receiving support must report these records to LPFF on a quarterly basis during the time in which the funds are being spent. They must also be prepared to submit original receipts alongside the final narrative and financial reports, if requested.

**Project Selection**

All projects selected for funding by the Luang Prabang Film Festival's Board of Directors will be notified by **29 November 2021** at the latest.

**Assistance**

LPFF has provided an annotated sample application, budget, and timeline to assist filmmakers in submitting their applications. These can be found here. Please note that these should only serve as examples for the preparation of the applicant's materials. All submitted content must be original.

Please email lff@lpfilmfest.org with any questions you may have.